ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ແຂວງບໍລິຄໍາໄຊ

007 - - -
ເລກທີ ____ /ຂບຊ

ບໍລິຄໍາໄຊ, ວັນທີ 07 FEB 2013

## ແຈ້ງການ

ເຖິງ: ບັນດາເມືອງ, ພະແນກການ, ກົມກອງ, ຫ້ອງການ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ, ບໍລິສັດ, ຫົວໜ່ວຍທຸລະກິດ ຕະຫຼອດຮອດພໍ່ແມ່ປະຊາຊົນ ພາຍໃນແຂວງ ບໍລິຄໍາໄຊ.

ເລື່ອງ: ການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999
- ອີງຕາມ ລັດຖະບັນຍັດຂອງ ປະທານປະເທດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008.
- ອີງຕາມ ໃບສະເໜີຂອງ ທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ແຂວງສະຫວັນນະເຂດ ສະບັບເລກທີ 15/ທຫລ.ສຂ, ລົງວັນທີ 11 ມັງກອນ 2013.

### ເຈົ້າແຂວງ-ແຂວງບໍລິຄໍາໄຊ ອອກແຈ້ງການດັ່ງນີ້:

1. ໃຫ້ຫ້ອງການ, ຫ້າງຮ້ານຕ່າງໆພາຍໃນແຂວງ ຕິດລາຄາສິນຄ້າ ແລະ ຄ່າບໍລິການຕ່າງໆ ເປັນເງິນກີບ.
2. ການຊໍາລະ, ຮັບຄ່າຊໍາລະສິນຄ້າ ແລະ ຄ່າບໍລິການຕ່າງໆຢູ່ພາຍໃນແຂວງ ຕ້ອງຊໍາລະເປັນເງິນກີບ.
3. ການແລກປ່ຽນເອົາເງິນກີບ ຫຼື ເງິນຕາຕ່າງປະເທດ ຕ້ອງໄປແລກປ່ຽນກັບຮ້ານແລກປ່ຽນເງິນຕາ ຫຼື ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຕາມລະບຽບກົດໝາຍ.
4. ຫ້າມນໍາເອົາທະນາບັດໄປວາງຂາຍ ຫຼື ນໍາໃຊ້ທະນາບັດ ໃນທາງທີ່ມີລັກສະນະທໍາລາຍທະນາບັດ ດ້ວຍການພັບ, ຕັດ, ເຈາະຮູ, ຈີກ, ແຕ້ມ, ຂີດຂຽນໃສ່ ຫຼື ດ້ວຍວິທີການໃດໆກໍ່ຕາມ ຊຶ່ງເຮັດໃຫ້ທະນາບັດທີ່ນໍາອອກສູ່ສັງຄົມນັ້ນເສຍຫາຍໃຊ້ການບໍ່ໄດ້.

ຖ້າຫາກວ່າມີການລະເມີດ 4 ຂໍ້ຂ້າງເທິງນີ້ ຖືວ່າເປັນການກະທໍາຜິດຕໍ່ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999 ແລະ ລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 .

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ເຈົ້າແຂວງ-ແຂວງບໍລິຄໍາໄຊ

ພັນ ນ້ອຍມະນີ

Pan NOYMANY